# ຄູ່ມືອົບຮົມຂັ້
# ນພື້ນຖານ
# KIDStory

# ສາລະບານ


ພາບລວມໃນການໃຊ້ Kidstory
ໜ້າທີ 4
ຊ່ວງທີ 1
6
ກ່າວຕ້ອນຮັບ

- ພຣະເຢຊູຊົງອວຍພອນເດັກນ້ອຍ

ຊ່ວງທີ 2 ອັນໃດຄືເລື່ອງລາວໃນພຣະຄຳພີ
ການຮຽນຮູ້ເລື່ອງຕ່າງໆ 8

- ຄວາມເປັນສາກົນ
- ອັນໃດຄືເລື່ອງລາວໃນພຣະຄຳພີ
- ຮູບແບບບົດຮຽນ
- ອັນໃດຄືຄວາມແຕກຕ່າງເຫດໃດຈິ່ງໃຊ້ເລື່ອງຕ່າງໆຂອງພຣະຄຳພີ
- ການຮຽນຮູ້ເລື່ອງຕ່າງ

ຊ່ວງທີ 3 ການເລົ່າເລື່ອງຕ່າງໆ
20

- ວິທີຂອງພຣະເຈົ້າ
- ການສື່ສານ
- ແບບຟອມການສະແດງ

ແບບຝຶກຫັດ
ຊ່ວງທີ 4: ການນະມັດສະການ
27
ຊ່ວງທີ 5: ເລົ່າເລື່ອງຊ້ຳ

- ເກມ
- ງານຝີມື,ລະຄອນແລະດົນຕີ

ຊ່ວງທີ 6: ແກະຫລົງຫາຍ
ຊ່ວງທີ 7: ການຄົ້ນພົບຄຳຖາມແລະການຕອບສະໜອງຄຳຖາມ

- ຕົວຢ່າງຄຳຖ່າມ

ຊ່ວງທີ 8: ການມອບໝາຍງານສຸດທ້າຍ 43

- ຟອມການວ່າງແຜ່ນບົດຮຽນ

ຊ່ວງທີ 9: ສົ່ງທ້າຍແລະການມອບຖວາຍ
47 ພາກພະນວກ

©Kids Around the World 2015

ການອົບຮົມ KIDStory

ພາບລ່ວມ

ຊ່ວງທີ 1:
ກ່າວຕ້ອນຮັບແລະນຳເຂົ້າສູ່ຊ່ວງຊົ່ວອວຍພອນເດັກນ້ອຍ

ເພັດ

ກະດານດຳ

ໝາກບານ

ໜ້າທີ 6

- ກ່າວຕ້ອນຮັບ. ເປີດການອົບຮົມແລະແນະນຳຜູ້ເຂົ້າຮ່ວມ
- ນຳສູ່ການເລົ່າເລື້ອງ
- ການເລົ່າເລື່ອງດ້ວຍ Storyboard
- ແນະນຳເກມ
- ຄຳຖາມ

ຊ່ວງທີ 2:ແມ່ນຫຍັງ ຄືການເລົ່າເລື່ອງ ໃນພຣະຄຳພີ ໜ້າທີ 8

ຕຸ້ນກັບແກ

- ຄວາມແຕກຕ່າງລະຫວ່າງການເລົ່າເ ລື່ອງຕ່າງໆກັບການສອນເດັກລະ ວິສຶກສາ
- ຮູບແບບບົດຮຽນ
- ການເລົ່າເລື່ອງແມ່ນຫຍັງ? ແລະເປັນຫຍັງຕ້ອງເລົ່າເລື່ອງ ?
- ການເລົ່າເລື່ອງແລະນຳເຂົ້າສູ່ເ

ຣື່ອງ ການຢ່າງເຫີ່ງນ້ຳຂອງພຣະເຢຊູຄຣິດເຈົ້າ

- ການຮຽນຮູ້ເລື່ອງຕ່າງໆ
- ການຄິດຄົ້ນຫາເລື່ອງຕ່າງໆ

ຊ່ວງທີ 3: ການເລົ່າເລື່ອງຕ່າງໆ ໜ້າທີ 20

ຈັບເວລາ

ຜ້າ

- ວິທີຂອງພຣະເຈົ້າ
- ການສົງສານ ເມດຕາ

ຊ່ວງທີ 4: ການນະມັດສະການ ໜ້າທີ 27

ຊ່ວງທີ 5: ເລົ່າເລື່ອງຊ້ຳ ໜ້າທີ 29

ເວລາ

ເຊືອກ

ແຜ່ນໂຄງເລື່ອງ

ສິທບິນ

ເຈ້ຍໂພດສະເຕີ

- ແນະນຳຫົວຂໍ້
- ການໃຊ້ເຊືອກແລະເກມ
- ເກມໂຄງເລື່ອງ
- ແບ່ງເປັນກຸ່ມໆໃນການຝຶກປະຕິບັດ ແລະໃຊ້ວິທີການເລົ່າເລື່ອງຊ້ຳທີ່ແຕກຕ່າງກັນ
  - ແຕ່ງເພລງ
  - ໃຊ້ກະດານ
  - ໃຊ້ຫຸ່ນມື
  - ລະຄອນ/ ການສະແດງ
  - ຮູບພາບ
  - ຟ້ອນລຳ/ ລະຄອນໃບ້
  - ເຈ້ຍແຕ້ມຮູບ / ແປ້ງໂດ
  - ເກມ

ຊ່ວທີ 6: ແກະຫລົງຫາຍ ໜ້າທີ 33

ຊ່ວງທີ 7: ຄຳຖາມແລະຄຳຕອບ ໜ້າທີ 34

○ ສະໝອງແລະຈິດໃຈ
○ ການຕອບສະໝອງແລະຈຸດສຳຄັນ

| |
|---|
| ຫລິັນບານ<br>ເຫິ່ງຫາດຊາຍ |

ຊ່ວງທີ 8: ການມອບໝາຍງານສຸດທ້າຍ ໜ້າທີ 43

ສິ່ງທ້າຍແລະມອບງານ ໜ້າທີ 47

ກ່າວຕ້ອນຮັບສູ່ການອົບຮົມ Kid story
ກ່າວແນະນຳຕົວເອງແລະໃຫ້ຜູ້ເຂົ້າຮ່ວມການອົບຮົມແນະນຳຕົນເອງແລະແບ່ງປັນສາເຫດທີ່ເຂົ້າຝຶກອົບຮົມ
ເນື່ອງຈາກເຮົາເຊື່ອວ່າເດັກນ້ອຍມີຄວາມສຳຄັນເຊັ່ນກັນກັບອົງພຣະເຢຊູຄຣິດ
ພຣະອົງຕ້ອງການໃຫ້ທຸກຄົນທັ້ງເດັກນ້ອຍແລະຜູ້ໃຫຍ່ຮູ້ຈັກພຣະອົງເປັນການ
ສ່ວນຕົວກ່ອນທີ່ຈະດຳເນີນການຕໍ່ໄປ.ຢາກໃຫ້ທ່ານຈັບຄູ່ແລະແບ່ງປັນຄວາມຮູ້ສຶກຂອງທ່ານເມື່ອບໍ່ໄດ້ຕ້ອນຮັບແລະຄວາມຮັກໃນສະໄໝ່ທີ່ທ່ານເປັນເດັກນ້ອຍ
ເລື່ອງລາວໃນພຣະຄຳພີ ຕອນພຣະເຢຊູຊົງອວຍພອນເດັກນ້ອຍ
ເລີ່ມຕົ້ນ:
ໃຫ້ຜູ້ເຂົ້າອົບຮົບຈັບຄູ່ແລະແບ່ງປັນຄວາມຮູ້ສຶກຂອງທ່ານເມື່ອບໍ່ໄດ້ຕ້ອນຮັບ
ແລະຄວາມຮັກໃນສະໄໝ່ທີ່ທ່ານເປັນເດັກນ້ອຍ
ອ່ານເບິ່ງແນວທາງສຳຫລັບຜູ້ເຂົ້າຮ່ວມອົບຮົມ ( ໜ້າທີ 37 )
ຈຸດປະສົງ:ເພື່ອໃຫ້ຜູ້ໃຊ້ຈິນຕະນາການແລະສົມມຸດໃຫ້ຕົນເອງຕົກຢູ່ໃນເລື່ອງ
ນັ້ນດ້ວຍເບິ່ງວ່າເຂົາເຫັນໃຜ?ເຫັນແມ່ນຫຍັງ?ຄົນໃນເລື່ອງຕອບສະໜອງຕໍ່ສິ່ງທີ່ທີ່ກຳລັງເກີດຂື້ນຢ່າງໃດ?ພວກເຂົາໄດ້ກລິ່ນອັນໃດ?ແລະຮູ້ສຶກແນວໃດ? ການໃຫ້ທຸກຄົນມີສ່ວນຮ່ວມ(ຫາກທ່ານມີຂອງມີຄ່າອາດຈະນຳມາສະແດງເປັນຕົວຢ່າງໃຫ້ເຫັນວ່າທຸກຄົນມີມູມມອງທີ່ແຕກຕ່າງກັນເຊິ່ງເຮັດໃຫ້ເລື່ອງລາວຊີວິດຊີວາຂື້ນ)ເມື່ອເຮົາແບ່ງປັນມຸມມອງຂອງເຮົາກໍເຮັດໃຫ້ເຮົາໄດ້ຮຽນຮູ້ໃຫ້ຈົດຈໍຢູ່ກັບເລື່ອງລາວໃນວັ

ນນີ້ແລະບໍ່ອາດນຳເອົາເລື່ອງໃນພຣະຄຳພີມາປົນໃນເລື່ອງນີ້ໃຫ້ຟັງແລະຈິນຕະນາການໂດຍບໍ່ຈຳເປັນຕ້ອງເບິ່ງຕາມພຣະຄຳພີຈິ່ງໃຫ້ເປີດພຣະຄຳພີໄດ້

**ບົດນຳ:** ເຮົາເຫັນພຣະເຢຊູມີຄວາມສຳພັນກັບຄົນທຸກປະເພດ ທັງຄົນໜຸ່ມຄົນເຖົ້າພຣະອົງພົບກັບຄົນຜູ້ທີມັກພຣະອົງແລະບໍ່ມັກພຣະອົງ
ຊົງເລືອບາງຄົນຕິດຕາມໃຫ້ທ່ານຟັງເລື່ອງນີ້ແລະເບິ່ງວ່າພຣະເຢຊູກັບເຫລົ່າສາວົກປະຕິບັດຕໍ່ຜູ້ອື່ນຢ່າງໃດເລື່ອງນີ້ມາຈາກພຣະຄຳພີແລະເຮົາກໍ່ຮູ້ວ່າເລື່ອງນີ້ເປັນ ເລື່ອງຈິ່ງ
(ຕອນນີ້ໃຫ້ທ່ານເປີດພຣະຄຳພີແລະວ່າງໃວ້ຂ້າງຕົວຂະນະທີກຳລັງເລົ່າເລື່ອງ )

## ເລົ່າເລື່ອງ : ມາລາໂກ 10:13-16

ວັນໜຶ່ງ
ມີມື້ໜຶ່ງໄດ້ມີພໍ່ແມ່ໄດ້ພາລູກຂອງພວກເຂົາມາຫາພຣະເຢຊູເພື່ອໃຫ້ພຣະອົງວ່າງມືແລະອວຍພອນໃຫ້ລູກຂອງພວກເຂົາແຕ່ພວກສາວົກຂອງພຣະອົງໄດ້ດ່າພໍ່ແມ່ທີ່ມາລົບກວນພຣະເຢຊູ
ເມື່ອພຣະເຢຊູເຫັນສິ່ງທີ່ເກີດຂື້ນ
ພຣະອົງກໍ່ຮ້າຍໃຫ້ພວກສາວົກຂອງພຣະອົງແລະກ່າວວ່າ
ຈົ່ງປ່ອຍໃຫ້ເດັກນ້ອຍເຂົ້າມາຫາເຮົາ
ຢ່າຫ້າມເຂົາເລີຍເພາະວ່າເພາະວ່າແຜ່ນດິນຂອງພຣະເຈົ້າເປັນຂອງຂອງຄົນຢ່າງພວກເຂົາ
ເຮົາບອກຄວາມຈິງກັບທ່ານທັງຫລາຍວ່າ
ໃຜທີ່ບໍ່ຍອມຮັບແຜ່ນດິນຂອງພຣະເຈົ້າເໝືອນເດັກນ້ອຍຜູ້ນີ້ ຈະເຂົ້າໃນແຜ່ນດິນນັ້ນບໍ່ໄດ້
ແລ້ວພຣະອົງອຸ້ມເດັກນ້ອຍເຫລົ່ານັ້ນ
ວ່າງມືເທິງພວກເຂົາແລ້ວຊົງອວຍພອນໃຫ້ພວກເຂົາ.
ເລົ່າຊ້ຳ:ໂດຍໃຊ້KIDSStorybordຫລືສ້າງເກມເພື່ອເລົ່າເລື່ອງນີ້ຄືນອີກຄັ້ງ

**ຄຳຖາມຄົ້ນຫາ:**

- ຂະນະທີ່ເລົ່າເລື່ອງນີ້ທ່ານສັງເກດເຫັນອັນໃດແດ່?ທ່ານຮູ້ສຶກແນວ ໃດ?
- ທ່ານມັກອັນໃດກ່ຽວກັບເລື່ອງນີ້?
- ທ່ານເຫັນເດັກນ້ອຍໃນເລື່ອງນີ້ບໍ່?ພວກເຂົາສະແດງໜ້າຕາແບບ ໃດ?ທ່ານຄິດວ່າເຂົາຮູ້ສຶກແນວໃດກັບພວກສາວົກແລະກັບພຣະເຢຊູ?
- ຈາກການທີ່ພໍ່ແມ່ນຳລູກຂອງພວກເຂົາມາຫາພຣະເຢຊູຢາກຮູ້ວ່າພໍ່ແມ່ຕ້ອງການອັນໃດຈາກພຣະອົງ?
- ແມ່ນຫຍັງແມ່ນຕົວເລືອກຂອງພໍ່ແມ່ ຂອງອັກຄະສາວົກ ພຣະເຢຊູ ເດັກນ້ອຍ ? ມີຕົວເລືອກອື່ນສຳລັບພວກເຂົາບໍ່?

- ເລື່ອງນີ້ບອກອັນໃດແກ່ເຮົາກ່ຽວກັບພຣະເຈົ້າ ພຣະເຢຊູຄຣິດ ?
- ຄົນໃນຊຸມຊົນຂອງທ່ານປະຕິບັດຕໍ່ເດັກນ້ອຍແບບໃດ? ຄຣິສຕະຈັກປະຕິບັດຕໍພວກເຂົາແບບໃດ?
- ຄຣິສຕະຈັກຂອງເຮົາຫ້າມເດັກນ້ອຍເຂົາມາຫາພຣະເຢຊູດ້ວຍວິທີໃດ?
- ຂ້າພະເຈົ້າຫ້າມເດັນ້ອຍມາຫາພຣະເຢຊູແບບໃດ?

**ຄຳຖາມເພືອຕອບສະໜອງ**

- ເລື່ອງນິບອກອັນໃດກ່ຽວກັບມຸມມອງຂອງພຣະເຈົ້າທີມີຕໍ່ເດັກນ້ອຍ?
- ຈາກສິ່ງທີທ່ານໄດ້ຍິນແລະໄດ້ເຫັນໃນວັນນີ້ພຣະເຈົ້າຊົງເອີ້ນໃຫ້ທ່ານເຮັດຫຍັງ?
- ຈາກເລື່ອງທີທ່ານໄດ້ຮຽນຮູ້ມາທ່ານຮູ້ສຶກວ່າພຣະວິນຍານບໍລິສຸດຮ້ອງຂໍໃຫ້ທ່ານເຮັດຫຍັງ?

## ຊ່ວງທີ 2 ການເລົ່າເລືອງພຣະຄຳພີຄືອັນໃດແລະການຮຽນຮູ້ເລື່ອງຕ່າງໆ

ເລີ່ມຊົ່ວໂມງຮຽນໂດຍໃຊ້ໃຫ້ຜູ້ເຂົ້າຮ່ວມການອົບຮົມແບ່ງປັນຄວາມຄິດເຫັນກ່ຍວກັບຄວາມແຕ່ກຕ່າງໃນການສອນບົດຮຽນເລື່ອງຕ່າງໆໃນພຣະຄຳພີເມືອປຽບທຽບກັບວິທີການທົວໄປໃນການສອນເດັກລະວິສຶກສາ

**ເລື່ອງຕ່າງໃນພຣະຄຳພີ (BIBLE STORYING) ຄືອັນໃດ?**

ເລື່ອງຕ່າງໆໃນພຣະຄຳພີ (BibleStorying)ເປັນຫລາຍກວ່າເລົ່າເລືອງ ເປັນການສ້າງສະພາບແວດລ້ອມການຮຽນຮູ້ທີຈະຊ່ວຍໃຫ້ພຣະວິນຍານເຮັດວຽກໃນຈິດໃຈຂອງຜູ້ຄົນເພືອພວກເຂົາຈະໄດ້ຮູ້ຈັກພຣະເຈົ້າເປັນການສ່ວນຕົວທັ້ງເຂົ້າໃຈຄວາມໝາຍໃນການຕິຕາມພຣະອົງຮຽນຮູ້ພຣະຄຳຂອງພຣະອົງເພືອວ່າເລື່ອງລາວຂອງພຣ

ະອົງຈະໄດ້ຮັບການບອກເລົ່າອີກຄັ້ງໜຶ່ງ KIDSTORY
ຄືການ

ຝຶກອົບຮົມສໍາຫລັບຜູ້ທີ່ຕ້ອງການສໍາພັດແລະສ້າງເດັກນ້ອຍໃຫ້ເປັນສາ
ວົກຂອງພຣະເຢຊູຄຣິດ(ຮູ້ພຣະເຈົ້າແລະວິທີທາງຂອງພຣະອົງຜ່ານການບອກ
ເລົ່າເລື່ອງຂອງພຣະອົງກັບປະສົບການແລະການລົມກັນ)

**ຄວາມເປັນສາກົນ (universals)**

*ບໍ່ວ່າທ່ານຈະຢູ່ແຫ່ງໃດໃນໂລກໃບນີ້ມີບາງສິ່ງທີ່ເປັນຄວາມຈິງສໍາຫລັບທຸກຄົນບໍ່ວ່າໃນວັດທະນາທໍາໃດກໍ່ມີຄວາມເປັນສາກົນສໍາລັບທຸກເພດ ທຸກໄວ ສິ່ງເລົ່ານີ້ກາຍເປັນສິ່ງສໍາຄັນເມື່ອເຮົາສອນພຣະຄໍາຂອງພຣະເຈົ້າໃຫ້ກັບເດັກນ້ອຍເຊິ່ງປະກອບດ້ວຍ:*

- **ຄອບຄົວ ແລະຍາດຕິພີ່ນ້ອງ**
- **ເພລງ**
- **ເກມ ຄວາມມ່ວນຊື່ນ**
- **ສິລະປະ( ການແຕ້ມຮູບ,ລະຄອນ,ການຟ້ອນ)**
- **ເລື່ອງຕ່າງໆ**

*ເຮົາຢາກຈະໃຫ້ພຣະເຈົ້າສ້າງເລື່ອງຕ່າງຂອງເຮົາໃຫ້ງົດງາມ ແຕ່ຖ້າເລື່ອງຂອງເຮົາບໍ່ມີພຣະເຈົ້າກໍ່ບໍ່ມີຄ່າອັນໃດ ເມື່ອເຮົາລົດຄວາມສໍາຄັນຂອງພຣະເຈົ້າເລື່ອງຂອງເຮົາກໍ່ບໍ່ມີຄວາມໝາຍຖ້າ ທ່ານເລົ່າເລື່ອງຂອງພຣະເຈົ້າໃນຊີວິດທ່ານທ່ານກໍ່ຈະເຂົ້າສູ່ເລື່ອງອັນຍິ່ງໃຫຍ່ຂອງພຣະເຈົ້າ ເປັນເລື່ອງທີ່ສວຍງາມທີ່ອອກມາຈາກຄວາມໂສກເສົ້າ*

**ຮູບແບບບົດຮຽນ**

*ບົດຮຽນນີ້ມີລັກສະນະຢ່າງໃດ?*
*ມາເບິ່ງວິທີເລົ່າເລື່ອງຂອງພຣະເຢຊູຄຣິດຊຶ່ງອວຍພອນເດັກນ້ອຍ*

- ການເລີ່ມຕົ້ນ:.ນີ້ເປັນການເປີດໂອກາດໃຫ້ຄົນມີສ່ວນຮ່ວມແລະເລົ່າເລື່ອງສ່ວນຕົວແກ່ກັນແລະກັນ ອາດຈະເປັນກິດຈະກຳຫລືອບໍໄດ້ກ່ຽວຂ້ອງກັບເລື່ອງໂດຍກົງແຕ່ ເປັນການນຳຜູ້ຄົນສູ່ແນວທາງຢາກໃຫ້ທ່ານຫັນໄປຫາຜູ້ທີ່ຢູ່ຂ້າງໆທ່ານແບ່ງປັນຄວາມຮູ້ສຶກຂອງທ່ານເມື່ອທ່ານບໍ່ໄດ້ຮັບການຕ້ອນຮັບຫລືບໍ່ ໄດ້ຮັບຄວາມສົນໃຈຕ້ອນເປັນ ເດັກນ້ອຍ.
- **ບົດນຳ**:ເປັນການໃຫ້ທຸກຄົນພ້ອມສຳຫລັບເລື່ອງລາວຂອງພຣະເຈົ້າມີຄຳເວົ້າທີ່ໃດທີ່ໃຫ້ຄົນພ້ອມສຳຫລັບເລື່ອງນີ້ຫລືບໍ່?ມີຂໍ້ມູນໃດທີ່ພວກ ເຂົາຕ້ອງການເຮັດໃຫ້ຄວາມສົນໃຈຫລືປ່ຽນແປງຈາກເລື່ອງລ່າສຸດຫລືບໍ່?ເລື່ອງລາວທີ່ເລົ່າໃນເຊົ້ານີ້ເວົ້າເຖິງສາວົກແລະຢາກໃຫ້ທ່ານຟັງວ່າ ພຣະເຢຊູແລະສາວົກປະຕິບັດຕໍ່ຜູ້ຄົນແນວໃດ?ຕ້ອນນັ້ນເຖິງເວລາທີ

  ***ຫາກກຸ່ມບໍ່ສາມາດແຍກຄວາມແຕກຕ່າງລະຫວ່າງການເລີ່ມຕົ້ນແລະ ການແນະນຳໃຫ້ອ່ານຂໍ້ຄວາມໜ້າທີ10ເຊິ່ງຈະບອກເຖິງຄວາມແຕກ ຕ່າງ***
- **ການເລົ່າເລື່ອງ:** ເປັນສິ່ງສຳຄັນທີ່ຈະຕ້ອງໃຫ້ຜູ້ຟັງຮູ້ວ່າເລື່ອງນີ້ມາຈາກພຣະຄຳພີແລະ ເປັນຄວາມຈິງໃນເວລານີ້ໃຫ້ທຸກຄົນປິດພຣະຄຳພີຂອງຕົນແລະຈົດຈໍ ກັບເລື່ອງແລະຜູ້ທີ່ກຳລັງເລົ່າເລື່ອງຈາກນັ້ນເຮົາກໍ່ຈະສາມາດເລົ່າເລື່ອງນີ້ຊ້ຳອີກໄດ້.
- **ການເລົ່າເລື່ອງຊ້ຳ:** ສິ່ງສຳຄັນຂອງການເລົ່າເລື່ອງຊ້ຳກໍ່ເພື່ອຄວາມຖືກຕ້ອງແລະຊັດເຈນຫລາຍຂຶ້ນໃນພຣະຄຳພີວິທີໜື່ງກໍ່ຄື ໃຫ້ຜູ້ເຂົ້າຮ່ວມອົບຮົມເປີດພຣະຄຳພີຂອງຕົນເອງແ

ລະອ່ານພຣະຄຳພີເລື່ອງນັ້ນອີກຄັ້ງອາດຈະໃຫ້ບາງຄົນອ່ານພຣະຄຳພີແລະຜູ້ນຳອາດຕັ້ງຄຳຖາມທີທຸກຄົນສາມາດຕອບໂດຍເບິ່ງຈາກພຣະຄຳພີທ່ານອາດຈະໃຊ້ກິດຈະກຳອື່ນໆທີຜູ້ເຂົ້າອົບຮົມມີສ່ວນຮ່ວມເປັນຣາຍບຸກຄົນຫລືເປັນກຸ່ມໃນເລື່ອງພຣະເຢຊູຊົງອວຍພອນເດັກນ້ອຍເດັກສາມາດເລົ່າເລືອງຊ້ຳໂດຍໃຊ້ເລືອງທີກະດານທີເປັນຜ້າສັກລາດທ່ານອາດຈະໃຊ້ເກມ.ເພລງຫລື ງານສິລະປະສົມີກໍ່ໄດ້ ທ່ານອາດຈະສຳພັດສິ່ງເຫລົ່ານີ້ໄດ້ຈາກການຢູ່ຮ່ວມກັນ.

- **ຄຳຖາມເພື່ອການຄົ້ນພົບແລະການຕອບສະນອງ:**

ການຕັ້ງຄຳຖາມແລະລົມກັນເຖິງເລື່ອງລາວເປັນສ່ວນສຳຄັນໃນຂະບວນການການຮຽນຮູ້ເຮົາຄຸ້ນເຄີຍກັນກັບການສອນໂດຍບໍ່ໄດ້ເວົ້າເຖິງລະດັບຂອງຄວາມຮູ້ສຶກແລະຈິດໃຈຜູ້ນຳຄວນພາກຸ່ມໄປໃນສິ່ງທີພຣະເຈົ້າຊົງກະທຳໃນຊີວິດຈິດໃຈໃນການຕອບສະໜອງຄວນມີຂໍ້ສັງເກດບາງຢ່າງທີທ່ານອະທິຖານຂໍພຣະວິນຍານບໍລິສຸດເວົ້າຜ່ານແຕ່ລະຄົນໃນກຸ່ມຂອງທ່ານ,ຫລັກສູດສ່ວນໃຫຍ່ຈະມີການນຳມາປະຍຸກໃຊ້ຈັກໜື່ງຂໍ້ຕາມຈຸດປະສົງຂອງບົດຮຽນໃນເລືອງຕ່າງໆ

ເຮົາຕ້ອງຂໍພຣະວິນຍານບໍລິສຸດເວົ້າຜ່ານແຕ່ລະຄົນໃນສິ່ງທີກ່ຽວຂອງຈົ່ງບໍ່ປັ້ນເລື່ອງແປກທີຈະມີການຕອບສະໜອງທີແຕກຕ່າງຈາກສະມາຊິກກຸ່ມຂອງທ່ານນັ້ນເປັນສິ່ງທີດີ ຂໍໃຫ້ທານຕິດຕາມຜົນໃນແຕ່ລະອາທິດເພືອເບິ່ງວ່າແຕ່ລະຄົນ ເຊືອຟັງສິ່ງທີພຣະເຈົ້າເວົ້າແບບໃດ

ຂໍ້ຄວາມສໍາຫລັບການເລີ່ມຕົ້ນແລະການແນະນໍາ
ໄຫ້ເລືອກອ່ານຂໍ້ຄວາມຈາກດ້ານລຸ່ມນີ້ແລ້ວໃຫ້ຜູ້ເຂົ້າອົບຮົມບອກທ່ານວາຂໍ້ຄວາມນີ້ເປັນຂໍ້ຄວາມສໍາຫລັບການເລີ້ມຕົ້ນຫລືການແນະນໍາ.

| ການເລີ່ມຕົ້ນ | ການແນະນໍາ |
|---|---|
| • ທ່ານເຄີຍຫລົງທາງບໍ?<br>• ທ່ານວ່າງໃຈໃຫ້ຄົນອື່ນຊ່ວຍທ່ານໃນເວລາໃດ?<br>• ທ່ານເສຍໃຈຫາກທ່ານເຮັດສິ່ງໜື່ງຫາຍ<br><br>• ເລົາໃຫ້ເຮົາຟັງຕອນທີທ່ານຍ້ານແທ້ໆ<br>· ຖ້າທ່ານສາມາດໄປທຸກບ່ອນໃນໂລກທ່ານຢາກໄປບ່ອນໃດ? | • ຊາວຍິວບໍ່ມັກຊາວສະມາເຣຍ<br>• ຄໍາອຸປະມາເປັນເລື່ອງທີ່ພຣະເຢຊູເລົາເພືອສອນບົດຮຽນ<br>• ໂລກຂື້ທູດເປັນໂລກທີສາມາດຮັກສາໄດ້ໃນປະຈຸບັນແຕ່ສມັຍພຣະເຢຊູຄົນຍ້ານຕິດໂລກຈາກຜູ້ທີເປັນໂລກນີ້ເພາະຖ້າທ່ານຕິດໂລກນີ້ທ່ານຕ້ອງຢູ່ຫ່າງ ຈາກ ຄົນອື່ນ<br>• ກ່ອນໜ້າເລື່ອງນີ້ເຮົາເຫັນວ່າພຣະເຢຊູຊົງລ້ຽງຄົນ 5000 ຄົນ |

## ຄວາມແຕກຕ່າງ

*ການເລົ່າເລື່ອງພຣະຄຳພີເລີ່ມຕົ້ນດ້ວຍພຣະຄຳພີແລະໃຫ້ພຣະວິນຍານບໍລິສຸດ*
*ເປັນຄູບົດບາດຂອງຜູ້ນຳຄືການເປັນຜູ້ອຳນວຍຄວາມສະດວກບໍ່ແມ່ນຄູສອນ ພຣະຄຳພີສິ່ງນີ້ໝາຍຄວາມວ່າແນວໃດ?*

- **ການສຳຫລວດກັບການອະທິບາຍ**
  *ຜູ້ນຳຈະຊ່ວຍຜູ້ເຂົ້າອົບຮົມໄດ້ຮຽນຮູ້ພຣະຄຳພີແລະເລື່ອງລາວໂດຍບໍ່ຕ້ອງອະທິບາຍຫລືສອນຄວາມໝາຍຂອງຂໍ້ຄວາມ*
- **ການອຳນວຍຄວາມສະດວກກັບການສອນ:**
  *ນີ້ອາດເປັນເລື່ອງທີ່ຍາກທີ່ສຸດສຳຫລັບຜູ້ທີ່ເຄີຍເປັນຜູ້ນຳກຸ່ມໃຫ້ນຳ*
  *ເລື່ອງທຸກຢ່າງກັບມາສູ່ການອະທິບາຍແລະຕັ້ງຄຳຖາມ*
- **ການຟັງກັບການເວົ້າ:**
  *ໃນຖານະຜູ້ນຳທ່ານຕ້ອງຄວນຟັງພຣະວິນຍານບໍລິສຸດແລະຜູ້*
  *ເຂົ້າຮ່ວມການອົບຮົມໂດຍບໍ່ຕ້ອງກັງວົນໃຈໃນການຕອບຄຳ ຖາມ*
- ***ເລົ່າເລື່ອງກັບການເທດສະໜາ:***
  *ການເລົ່າເລື່ອງເປັນການສື່ສານສອງທາງຂະນະທີ່ການເທດສະໜາເປັນການສື່ສານທາງດຽວ*

## ເຫດໃດຈຶ່ງໃຊ້ເລື່ອງໃນພຣະຄຳພີ:

*ເຫດໃດເຮົາຈຶ່ງຕ້ອງໃຊ້ເລື່ອງໃນພຣະຄຳພີໃນການສອນເດັກນ້ອຍ ?*

- ມີປະຊາກອນກວ່າ2/3ທີ່ບໍ່ສາມາດອ່ານໜັງສືພວກເຂົາຮຽນຮູ້ຜ່ານເລື່ອງຕ່າງໆ?
- ພຣະເຢຊູຊົງສອນໃນເລື່ອງແລະຄຳອຸປະມາຢູ່ສະເໝີມັດທາຍ 13:34

- ກວ່າ 75 ເປີເຊັນ ຂອງພຣະຄຳພີຂຽນໄວ້ເປັນເລື່ອງໆ
- ພຣະຄຳຂອງພຣະເຈົ້າມີລິດອຳນາດຫລາຍກວ່າຄຳເວົ້າຂອງເຮົາ

- ພຣະຄຳຂອງພຣະເຈົ້າປ່ຽນແປງຊີວິດຄົນຜ່ານພຣະວິນຍານບໍລິສຸດ
- ໂດຍທົ່ວໄປແລ້ວຜູ້ຄົນມັກເລື່ອງຢູ່ແລ້ວແລະທ່ານສາມາດໃຊ້ ສິ່ງນີ້ໄດ້ກັບທຸກຄົນໃນທຸກແຫ່ງ.
- ຜູ້ຄົນຈະຮູ້ພຣະຄຳຂອງພຣະເຈົ້າແລະໃກ້ຊິດກັບພຣະອົງ ຫລາຍຂຶ້ນ
- ເດັກນ້ອຍສາມາດເລົ່າເລື່ອງໃນພຣະຄຳພີໃຫ້ກັບຄົນອື່ນ ທີ່ອາດຈະບໍ່ຮູ້ຈັກພຣະອົງ.

## ເລື່ອງຂອງພຣະເຢຊູແລະເປໂຕຍ່າງເທິ່ງໜ້ານ້ຳ ມັດທາຍ 14:22-33

ໃຫ້ກ່ຽມບົດຮຽນແບ່ງກຸ່ມຜູ້ເຂົ້າອົບຮົມກຸ່ມລະ3-4 ຄົນໃນແຕ່ລະກຸ່ມໃຫ້ພວກເຂົາອ່ານເລື່ອງຂອງພຣະເຢຊູແລະເປໂຕຍ່າງເທິ່ງນ້ຳ
ຈາກມັດທາຍ14:2223ທ່ານອ່າດເລົ່າເລື່ອງກ່ອນທີ່ພວກເຂົາຈະແຍກເປັນກຸ້ມ
ກະໄດ້ຫລັງຈາກອ່ານແລ້ວໃຫ້ພວກເຂົາເລີ່ມຕົ້ນດ້ວຍການເລີ່ມບົດເລີ່ມຕົ້ນແລະການແນະນຳ.

## ຮຽນຮູ້ເລື່ອງຕ່າງໆ

*ຕອນນີ້ເປັນເວລາໃນການຮຽນຮູ້ເລື່ອງຕ່າງໃຫ້ຈື່ໄວ້ວ່ານີ້ເປັນການເລົ່າເລື່ອງບໍ່ ແມ່ນແຕ່ຈົດຈຳຂໍ້ສຳຫລວດເທົ່ານັ້ນເມື່ອທ່ານກັບບ້ານແລະເລົ່າປະສົບການ ຂອງ ທ່ານທີ່ນີ້ໃຫ້ຜູ້ອື່ນຟັງທ່ານຄິດແລະຈຳສິ່ງທີ່ທ່ານຕ້ອງເວົ້າຫລືບໍ່?ທ່ານຈຳຜູ້ຄົນແລະເຫດການທີ່ມີຜົນກະທົບຕໍ່ທ່ານເຫດສັນໃດການເລົ່າເລື່ອງພຣະເຈົ້າຈຶ່ງ ແຕກ ຕ່າງ?ເຮົາຕ້ອງການເລົ່າເລື່ອງຂອງພຣະເຈົ້າແລະສະແດງອອກດ້ວຍຄວາມຕື່ນ ເຕັ້ນຂະນະທີ່ເຮົາຫວນຄືນລຳລຶກລຶງກັບຜູ້ຟັງເຮົາບໍ່ພຽງ ແຕ່ຕ້ອງການນຳເດັກ ນ້ອຍເຂົ້າສູ່ເລື່ອງຕ່າງ?ໃຫ້ພວກເຂົາຮູ້ຈັກພຣະເຈົ້າແລະທຳງານຂອງພຣະອົງ ເທົ່ານັ້ນແຕ່ເຮົາຕ້ອງການໃຫ້ພວກເຂົາສາມາດເລົ່າເລື່ອງໃຫ້ຜູ້ອື່ນຟັງຕໍ່ໄປອີກ. ກ່ອນ ອື່ນເຮົາຕ້ອງຕຽມຕົວຂອງເຮົາເອງ*

## ຕຽມຫົວໃຈຂອງທ່ານ

ຈົດໃຈຂອງທ່ານຢູ່ໃນສະຖານະທີ່ໄດ້ຍິນແລະຕອບສະໜອງຕໍ່ພຣະວິນ ຍານບໍລິສຸດຫລືບໍ່? ຖ້າບໍ່ແລ້ວຄວນເຮັດແນວໃດ?

- **ອະທິຖານ:**ທ່ານຍອມໃຫ້ພຣະເຈົ້າເວົ້າຜ່ານທ່ານເຫມືອນກັບ ທ່ານເວົ້າກັບພຣະອົງບໍ່?
- ອ່ານເລື່ອງໃນພຣະຄຳພີ: ທ່ານຕ້ອງອ່ານພຣະຄຳພີເລື່ອງນັ້ນໃຫ້ຫລາຍຖ້າເປັນໄປໄດ້ໃຫ້ອ່ານຈາກການແປ່ທີ່ແຕກຕ່າງກັນພຣະເຈົ້າເປີດເຜີຍອັນໃດກັບເຈົ້ານີ້ໃໝ່ໃນເລື່ອງທີ່ອ່ານກ່ຽວຂ້ອງກັບທ່ານໃຫ້ຈື່ໄວ້ວ່ານີ້ຄືສິ່ງທີ່ພຣະວິນຍານບໍລິສຸດທີ່ກຳລັງສຳແດງໃຫ້ແກ່ທ່ານເຫັນຂະນະທີ່ພຣະອົງຊົງ

ຕງໃຈ ີດໃຈຂອງທ່ານພຣະວ ິນຍານອາດຈະເວ ົ້າຜ່ານເຮ ົາແຕ
ກຕ່າງກ ັນກ ັບຄ ົນໃນກ ຸ່ມທ ີ່ທ່ານກ ຳລ ັງເລ ົ່າເລ ື່ອງ

- ມ ູມມອງ:ຄ ິດກ່ຽວກ ັບພຣະຄ ຳທ ີ່ສອນພຣະວ ິນຍານຊ ົງເປ ີດເຜ ີຍອ ັນ
  ໃດແກ່ທ່ານຜ ູ້ເຂ ົ້າຮ່ວມການອ ົບຮ ົມຈ ຳເປ ັນຕ ້ອງໄດ ້ຍ ິນຫລ ືຮຽນຮ ູ້ອ ັນ ໃດ?
  ໃຫ ້ຈ ິນຕະນາການເຖ ິງສ ິ່ງທ ີ່ທ່ານເຫ ັນ
  ທ ີ່ທ່ານໄດ ້ສ ຳພ ັດ ແລະໄດ ້ຍ ິນ
  ວ່າທ່ານມ ີຄວາມຮ ູ້ສ ືກແນວໃດ?
  ມ ີຕ ົວລະຄອນອ ັນໃດແລະມ ູມມອງຂອງພວກເຂ ົາໃນສະຖານນະການນ ັ້ນເປ ັນຢ່າງໃດ?
  ມ ູມມອງຂອງພຣະເຈ ົ້າໃຫ ້ຄ ຳຕອບ ຄ ຳຖາມເຊ ັ່ນ: ແມ່ນໃຜຢ ູ່ໃສ ແບບໃດ
  ເຫດໃດໃຫ ້ເອ ົາຕ ົວເອງເຂ ົ້າໄປຢ ູ່ໃນນ ັ້ນແລະເລ ົ່າເລ ື່ອງໃນລ ັກ ສະນະການເລ ົ່າເລ ື່ອງຂອງບ ຸກຄ ົນທ ີ່ສາມ.

## ແບບເລ ື່ອງຕ່າງໆ

*ມ ີວ ິທ ີອ ັນໃດແດ່ທ ີ່ຈະຊ່ວຍໃຫ ້ທ່ານຈ ົດຈ ຳເລ ື່ອງເລ ົ່າໄດ ້ວ ິທ ີທ ີ່ດ ີທ ີ່ສ ຸດກ ໍຄ ືແບ່ງເປ ັນ4-5ບ ົດຫລ ືຕອນ ເມ ື່ອທ່ານກ ຳນ ົດພາບແຕ່ລະຕອນຫລ ືສະຖານນະການໃວ ້ໃຈໄດ ້ທ່ານສາມາດທ ີ່ຈະໃສ່ລາຍລະອຽດຂອງເລ ື່ອງເລ ົ່າລ ົງໄປໄດ ້.*
*ສ ິ່ງສ ຳຄ ັນກ ໍຄ ືທ່ານຕ ້ອງເລ ົ່າເລ ື່ອງລາວຕາມພຣະຄ ຳພ ີແລະມ ີຄວາມຖ ືກຕ ້ອງ ຕາມພຣະຄ ຳພ ີຫມາຍຄວາມວ່າເຮ ົາຈະບ ໍ່ເພ ີ່ມເຕ ີມຄ ຳເວ ົ້າໃດໆຂອງເຮ ົາຫລ ືຕ ີ ຄວາມຫມາຍຂອງເລ ື່ອງເລ ົ່າສ ້າງຄວາມອ ັນຈ ົດຈ ຳເພ ື່ອທ ີ່ຜ ູ້ຟ ັງຈະມ ີສ່ວນໃນ ເລ ື່ອງນ ັ້ນ ແຕ່ຍ ັງຄ ົງຮ ັກສາຄວາມເປ ັນຈ ິງໃນພຣະຄ ຳຂອງພຣະເຈ ົາບ ໍ່ແມ່ນຄ ຳເວ ົ້າຂອງເຮ ົາສ ຸດທ ້າຍເຮ ົາຕ ້ອງການໃຫ ້ທ ຸກຄ ົນຮຽນຮ ູ້ຢ່າງ*

*ດີເພື່ອຈະໄດ້ເລົ່າຕໍ່ໃຫ້ຜູ້ອື່ນຟັງ ອີກຄັ້ງ.ນີ້ເປັນວິທີການບ່າງຢ່າງທີ່ທ່ານສາມາດຮຽນຮູ້ເລື່ອງເລົ່າບໍ່ນີ້ວິທີທີ່ຖືກ ຕ້ອງ ຫລີຜິດໃນການຮຽນຮູ້ເລື່ອງເລົ່າທ່ານຕ້ອງຫາວິທີທີ່ເຫມາະສົມທີ່ສຸດສໍາຫລັບ ຕົວທ່ານເອງ*

- ການອ່ານແລະເລົ່າ: ອ່ານເລື່ອງລາວ ປິດພຣະຄໍາພີຂອງທານ ແລະເລົ່າເລື່ອງອອກມາດັງໆການອ່ານເລື່ອງລາວເພື່ອເບິ່ງວ່າຖືກຕ້ອງ ປານໃດແລະໃຫ້ເຮັດແບບນີ້ຫລາຍໆເທື່ອ
- **ຈົດເຫດການຕ່າງໆ**
- ແຜ່ນທີ່ຄວາມຄິດ (ຫນ້າ 17)
- **ວາດພາບເລື່ອງເລົ່າ** (ຫນ້າ18)
- **ຫ້ອງແລະສະຖານທີ່** ຍ້າຍໄປອ້ອມຮອບຫ້ອງເພື່ອສະແດງໃຫ້ເຫັນເຖິງການເຄື່ອນໄຫວຂອງຕົວລະຄອນໃນພຣະຄໍາພີຫລືຕອນທີ່ແຕກຕ່າງກັນ ຈັດທ່າທາງຂອງທ່ານຂະນະທີ່ເລົ່າເລື່ອງ
- **ພາສາມື:** ເຊັ່ນ ການເຮັດມືເປັນຮູບໂລກຫມາຍເຖິງການຊົງສ້າງ
- **ຄໍາສໍາຄັນ:** ສໍາຫລັບແຕ່ລະຕອນຫລືການຈັດສາກ
- ວີດີໂອ ຢູທູບ ກະດ່ານສັກລາດ ຫນັງສືນິທານເດັກ

ນີ້ບໍ່ແມ່ນເປັນພຽງແຕ່ຕົວຫນັງສືເທົ່ານັ້ນແຕ່ເປັນການເລົ່າເລື່ອງລາວຈາກພາບ ໃນຈິດໃຈຂອງເຮົາຊຶ່ງມັນໄດ້ຜົນ ສໍາຫລັບຜູ້ຝຶກທ່ານຈະເລືອກສິ່ງທີ່ເຫມາະສົມທີ່ສຸດສໍາຫລັບມານໃນການຈື ເລື່ອງລາວເປັນສິ່ງສໍາຄັນໃນການຊ່ວຍຄົນທີ່ກໍາລັງຝຶກໃຫ້ໃຊ້ເຄື່ອງມືທີ່ເຫມາະສົມທີ່ສຸດສໍາຫລັບພວກເຂົາແລະຫນູນໃຈວ່າສັກມື້ຫນຶ່ງພວກເຂົາກໍຈະຕ້ອງນໍາຄືກັນ ນອກຈາກນີ້ຍັງເປັນສິ່ງສໍາຄັນໃນການຫາເຄື່ອງມືໃນການເລົ່າເລື່ອງເລົ່າຊຶ່ງຈະ

ເຮັດໃຫ້ງ່າຍສະດວກຂຶ້ນໃຫ້ຜູ້ເຂົ້າອົບຮົມຄົ້ນພົບສິ່ງທີ່ດີທີ່ສຸດສຳຫລັບພວກເຂົາ.ການໃຫ້ເດັນ້ອຍເລົ່າເລື່ອງຊ້ຳກໍ່ຍັງເປັນວິທີການທີ່ດີອີກຢ່າງໜຶ່ງ ຈົ່ງຈື່ຈຳວິທີຕ່າງໆຮູບແບບການຮຽນທີ່ແຕກຕ່າງກັນເພື່ອໃຫ້ເດັກເກີດຄວາມສົນໃຈ.


Story

ການວາດພາບປະກອບເລື່ອງເລົ່າ

**ເລື່ອງໃນພຣະຄຳພີ................................................**

**ພຣະຄຳພີອ້າງອີງ................................................**

| | | |
|---|---|---|
| | | |
| | | |
| | | |

## ປະດິດເລື່ອງເລົ່າ (Crafting the Story)

*ການປະດິດຄື ການນຳບາງສິ່ງມາເຮັດໃຫ້ມີຄຸນຄ່າແລະມີຄວາມໝາຍ ຊຶ່ງຕ້ອງໃຊ້ທັກສະແລະຄວາມໃສໃຈໃນລາຍລະອຽດ ເມືອເຮົາປະດິດເລື່ອງເລົ່າໃນພຣະຄຳພີນັ້ນບໍໄດ້ເປັນພຽງການທ່ອງຈຳເທົ່ານັ້ນ ແຕ່ເປັນການເລົ່າເລື່ອງໂດຍພິຈະນາສິ່ງຕໍໄປນີ້;*

- *ຄວາມຮູ້: ຜູ້ຂຽນເລື່ອງເລົ່າໃນພຣະຄຳພີຂຽນດ້ວຍຄວາມເຂົ້າໃຈວ່າຜູ້ຟັງມີຄວາມຮູ້ກ່ຽວກັບວັດທະນາທຳໃນເລື່ອງເລົ່ານັ້ນເຊັ່ນ: ໃນຄຳອຸປະມາເລື່ອງຊາວສະມາເລຍໃຈດີ ຄົນຍິວຮູ້ວ່າພວກເຂົາບໍ່ມັກຊາວສະມາເລຍ ພວກເຂົາຮູ້ແຕ່ພວກເຂົາບໍ່ຮູ້ຈິ່ງຕ້ອງມີການແນະນະໃຫ້ຮູ້ ຫາກເປັນໄປໄດ້ໄຫ້ໃຊ້ພຣະຄຳພີອ້າງອີ່ງອື່ນໆ ສະໜັບສະໜູນຄຳເວົ້າຂອງທ່ານ*
- *ໄວທີເໝາະສົມ: ໃນເລື່ອງເລົ່າມີຄຳຫລືແນວຄວາມຄິດທີເດັກນ້ອຍບໍ່ເຂົ້າໃຈຢູ່ຫລືບໍ່? ຈະເປັນການດີຫາກຫາຄຳມາໃຊ້ແທນເພືອໃຫ້ເດັກເຂົ້າໃຈຢ່າງຖືກຕ້ອງຕາມພຣະຄຳພີຫລືມີການອະທິບາຍໃນຊ່ວງຂອງການແນະນຳ.*
- *ສິ່ງທີບໍ່ຈຳເປັນ: ລາຍລະອຽດບາງຢ່າງເຮັດໃຫ້ເລື່ອງເລົ່າຍຸດສະຫງັກແລະຄົນກໍບໍຮູ້ວ່າແມ່ນຫຍັງເປັນສິ່ງສຳຄັນເຊັ່ນ: ຊື່ຕົວເລກແລະສະຖານທີທີບໍໄດ້ສຳຄັນຕໍ່ການຈົດຈຳແຕ່ມັກຈະຫັນຄວາມສົນໃຈຂອງຜູ້ເຂົ້າ ຮ່ວມ*
- *ການເປີດແລະປິດຂໍ້ມູນ: ແມ່ນຫຍັງເປັນຂໍ້ມູນພື້ນຖານທີ່ຈຳເປັນຫລືມີການສົ່ງຜ່ານຈາກເລື່ອງກ່ອນໜ້ານີ້ຫລືບໍ່?*

- *ຄວາມບໍ່ເຫມາະສົມທາງວັດທະນາທຳ : ໃຫ້ໄວຕໍ່ສິ່ງທີ່ຢູ່ໃນເລື່ອງເລົ່າທີ່ອາດຈະເຮັດໃຫ້ຜູ້ເຂົ້າຮ່ວມການອົບຮົມບໍ່ຄ່ອຍສະບາຍໃຈ(ເຊັ່ນ: ພຣະເຢຊູຢູ່ກັບຜູ້ຫຍິງທີ່ບໍ່ນ້ຳຕາມລຳພັງ)*

**ໃຫ້ແຕ່ລະຄົນໃຊ້ສຶກສາເລື່ອງຂອງການຮຽນຮູ້10ນາທີ ໃຫ້ຈັບເປັນຄູ່ຫລືເປັນກຸ່ມນ້ອຍ ແລ້ວໃຫ້ແຕ່ລະຄົນມີໂອກາດເລົ່າເລື່ອງເລົ່າໃຫ້ຄວາມສຳຄັນກັບການເລົ່າເລື່ອງ ເລົ່າຢ່າງສະໜຸກສະໜານແນ້ແຕ່ການເລົ່າເລື່ອງບໍ່ຄ່ອຍໄດ້ດີປານໃດ.**

## ຊ່ວງທີ 3
## ເລົ່າເລື່ອງ

### ຮູບແບບຂອງພຣະເຈົ້າ

*ເພື່ອໃຫ້ການເລົ່າເລື່ອງມີຊີວິດຊີວາແລະໃຫ້ເດັກນ້ອຍເຂົ້າເຖິງເລື່ອງທີ່ຈະເລົ່າໃນພຣະຄຳພີເຮົາຈະເພີ່ມວິທີການບາງຢ່າງເຂົ້າໄປໃນການເລົ່າ ເລື່ອງ ຈື່ໄວ້ວ່າເຮົາຍັງຄົງຕ້ອງຊັດເຈນແລະຖືກຕ້ອງໃນສິ່ງທີ່ພຣະຄຳພີກ່າວ ແລະບໍ່ເພີ່ມເຕີມແນ່ນຫາຍັງໃນສ່ວນຂອງເຮົາກ່ອນອື່ນໃຫ້ເຮົາມາເບິ່ງຫລັກການບາງຢ່າງກ່ຽວກັບວິທີການທີ່ພຣະເຈົ້າບອກເລື່ອງລາວຂອງພຣະ ອົງ ພຣະອົງຊົງສ້າງວິທີການເພື່ອ.*

- ເຮັດໃຫ້ໜ້າຈົດຈຳ:
  *ພຣະເຈົ້າຊົງຂໍ້ຄວາມຂອງພຣະອົງໃນຮູບແບບທີ່ເຮົາບໍ່ມີວັນລືມຊື່ງ ຊ່ວຍໃຫ້ເຮົາສຳພັດເລື່ອງລາວ ຍົກຕົວຢ່າງເຊັ່ນ:*
  *ຮຸ້ງກິນນ້ຳທີ່ພຣະເຈົ້າສ້າງໄວ້ເທິງຟ້າຫລັງຈາກນ້ຳຖ້ວມແລະໂຫມາ*
  *ສຳພັດທີ່ຮອຍທີ່ຝ່າມືຂອງພຣະເຢຊູຄຣິດ*

- ບໍ່ຄາດຄິດ :
  ບາງຄັ້ງຂໍ້ຄວາມມາໃນລັກສະນະທີ່ບໍ່ຄາດຄິດ
  ຕົວຢ່າງເຊັ່ນ: ບາລາອຳກັບລາ,ໂມເຊກັບພຸ່ມໄມ້ໄຟ,
  ໂຊໂລຕາບອດ,
  ການຮັກສາທີ່ແຕກຕ່າງກັນໃນພຣະຄຳພີ(ນາອາມານ,ຄົນງ່ອຍແລະ ຄົນຕາບອດ)ເຮົາສາມາດປ່ຽນສະພາບແວດລ້ອມໂດຍວ່າງຕຳແນ່ງການຈັດບ່ອນນັ່ງຫລືສ້າງຄວາມຮູ້ສຶກດ້ວຍ ຄວາມສະຫວ່າງແລະຄວາມມືດ

- **ປະສາດສໍາພັດຫລາຍຢ່າງ**:ພຣະເຈົ້າຊົງໃຫ້ຄວາມຮູ້ສຶກໃນການ ສ້າງເລື່ອງຕ່າງຂອງພຣະອົງໃຫ້ໜ້າຈົດຈໍາແລະໃຊ້ກົດ ຈດກໍາຫລາຍ ເທົ່າ ໃດ ເຮົາກໍຍັງຈົດຈໍາຫລາຍຂື້ນເທົ່ານນັ້ນ
  - ຮູບພາບ:ຕົວເຮົາເປັນຮູບພາບທີ່ຄົນເຫັນໄດ້ດັ່ງນັ້ນຈົ່ງເປັນ ປະໂຫຍດທີ່ຜູ້ຄົນທີ່ຈະສາມາດເຫັນເລື່ອງລາວໄດ້.
    - ວັດຖຸ:

**ໃຊ້ຜ້າປະເພດຕ່າງໆ ແກ່ແຕ່ລະກຸ່ມແລະໃຫ້ພວກເຂົາບື້ກພາບວ່າມັນຈະນໍາມາ ໃຊ້ເລົ່າເລື່ອງຂອງພຣະເຢຊູແລະເປໂຕຢ່າງເທົ່ງນັ້າແບບ ໃດ?**

  - - *KIDS Storyboards* ເຮົາຈະເວົ້າເພີ່ມເຕີມເລື່ອງນີ້ພາຍຫລັງ
    - ເຄື່ອງແຕ່ງກາຍ
  - ສໍາພັດ: ຕົວຢ່າງ ຈັບສິ່ງຂອງຫລື່ຜ່ນສິ່ງຂອງໄປມາແລ້ວສົດນ້ໍາໄປກັບຕົວ ເດັກນ້ອຍ.
  - 
  - ໄດ້ຍິນ: ຕົວຢ່າງ ສຽງປະກ່ອບ,ຖູມືເພື່ອເປັນສຽງຝົນ
  - ກລິ່ນ: ຕົວຢ່າງ ຈູດທູບ ຮູບປາທີ່ມີກິ່ນຄ່າວ
  - ລົດຊາດ: ເຊັ່ນ ການທົດລອງຊີມອາຫານ

- ການດໍາເນີນຊີວິດ: ພຣະເຢຊູຊົງໃຊ້ຊີວິດກັບພວກສາວົກຂອງພຣະອົງ ພຣະອົງບໍພຽງແຕ່ສັ່ງສອນພວກເຂົາເທົ່ານັ້ນແຕ່ຍັງເປັນແບບຢ່າງແກ່ພວກສາວົກດ້ວຍພຣະອົງບໍໄດ້ຍົກລະດັບພຣະອົງເອງແຕ່ຊົງຮັບໃຊ້ພວກເຂົາ

ດ້ວຍເຮົາສາມາດເຮັດຢ່າງດຽວກັບພຣະອົງໄດ້ແບບໃດ?ຫລາຍຄັ້ງທີການກະທຳແລະທ່າທີຂອງເຮົາຈະຊ່ວຍໃຫ້ເດັກນ້ອຍເຂົ້າໃຈວ່າພຣະເຢຊູແມ່ນໃຜແລະ
ວິທີການທີພຣະອົງກະທຳແລະທາທີຂອງເຮົາຈະຊ່ວຍເດັກນ້ອຍເຂົ້າໃຈວ່າພຣະເຢຊູແມ່ນໃຜແລະວິທີການທີພຣະອົງຊົງຕອບສະໜອງຕໍ່ຜູ້ຄົນໃນ ເລື່ອງພຣະຄຳພີ.

**ແບ່ງກຸ່ມນ້ອຍໃຫ້ເວລາ 3 ນາທີ**

ວິເຄາະເລື່ອງລາວໃນພຣະຄຳພີທີໃຊ້ຄວາມຮູ້ສຶກທີແຕກກັນໃຫ້ຫລາຍທີ ສຸດທີຈະເຮັດໄດ້

**ວິທີຕ່າງໆໃນການບອກເລົ່າເລື່ອງຕ່າງໆ.**

- ບຸກຄົນທີ ໜຶ່ງ:
  ໃຫ້ຄິດວ່າທ່ານເປັນຕົວລະຄອນຄົນໜຶ່ງໃນເລື່ອງ
- ບຸກຄົນທີສາມ:ເປັນຜູ້ເລົ່າເລື່ອງ
- ສິລະປະ: ກະດານ ສີທຽນ ບິກ
- ອຸປະກອນ: ເສື້ອຜ້າ ຂວດສະເປຍ
- ລະຄອນ
- ການເຄື່ອນໄຫວມື
- ຜູ້ຊົມມີສ່ວນຮ່ວມ
- ໃຫ້ຄົນອ່ານເລື່ອງຂະນະທີອີກຄົນໜຶ່ງສະແດງທ່າທາງ

## ການຖ່າຍທອດສິດ

- *ການເຄືອນໄຫວ:ຢ່າຢຸດເຊົາຢູ່ແຕ່ຕັ້ງນັ້ງໃຫ້ທ່ານຍ້າຍໄປມາໂດຍສະເພາະຕ້ອງຍ້າຍບ່ອນໜື່ງໄປອີກບ່ອນໜື່ງ*
- **ການສະແດງອອກ**:ການສະແດງອອກທາງສີໜ້າຂອງທ່ານໃຫ້ເລື່ອງນ່າເຊື່ອຖືຫລາຍຂື້ນທ່ານບໍ່ຈໍາເປັນຕ້ອງເວົ້າຫຍັງຫລາຍຫາກທ່ານສະແດງອອກທາງສີໜ້າ**ໃຫ້ຜູ້ເຂົ້າອົບຮົມຫັນໜ້າເຂົ້າຫາຄູ່ຂອງຕົນໃຫ້ແຜ່ນງານຫົວຂໍ້ການສະແດງອອກທາງສີໜ້າຢູ່ໃນໜ້າຖັດໄປໃຫ້ຄົນໜື່ງເລືອກການສະແດງ5ຢ່າງໂດຍໃຫ້ຄົນໜື່ງສະແດງອອກທາງສີໜ້າຫລັງຈາກນັ້ນກໍ່ປ່ຽນກັນເຮັດຫລືໃຊ້ອີກຄົນໜື່ງສະແດງສີໜ້າແລະອີກຄົນໜື່ງເດົາວ່າເລື່ອງແມ່ນຫຍັງ?**
- ***ໃຫ້ຜູ້ຊົມມີສ່ວນຮ່ວມ:***
  *ບາງຄັ້ງກໍ່ເປັນສິ່ງທີ່ສະນຸກສະນານໃຫ້ເດັກນ້ອຍບາງຄົນຫລືເດັກນ້ອຍທຸກຄົນມີສ່ວນຮ່ວມໃນການເລົ່າເລື່ອງລາວຊື່ງອາດຈະເຮັດໄດ້ໂດຍ:*
  - **ຄໍາທີ່ເກີດຂື້ນຊ້ຳໆວະລີທີ່ຜູ້ຮ່ວມສາມາດເວົ້າຫລືຕອບສະ ໜອງໄດ້**
  - **ການເຄືອນໄຫວມືແລະຮ່າງກາຍ**
  - **ສຽງປະກອບ**
  - **ເພລງ**
  - ***ການມີສ່ວນຮ່ວມ:ໂດຍການສະແດງທັງເລື່ອງຫລືສະແດງໃນສ່ວນຕ່າງໆຂອງ ເລື່ອງ***
- **ສຽງ**:ສຽງທີ່ເຮັດໃຫ້ມີເລື່ອງລາວມີຊີວິດສິ່ງທີ່ກໍໃຫ້ເກີດຄວາມ

ເບືອໜ່າຍພາຍໃນກຸ່ມຫລືຫ້ອງຮຽນຄືການໃຊ້ໂທນສຽງລະດັບດຽວ ໃຫ້ເກີດການສາທິດດັ່ງນີ້:

- **ສຳນຽງ**
- **ລະດັບສຽງ**
- ການຍຸດຊິວະຂະນະ:ຊື່ງຈະມີປະສິດທິພາບຫລາຍໃນເລື່ອງ ລາວແລະການສະແດງຄຳຄິດເຫັນ ຢ່າຢ້ານຄວາມມິດຫງຽບ ເພາະຈະຊ່ວຍໃຫ້ພຣະວິນຍານບໍລິສຸດທີທຳງານທ່າມກາງ ຄວາມມິດຫງຽບເຮັດໃຫ້ເລື່ອງແລະສະຖານນະການອອກ ຈາກຄວາມຄິດໄປສູ່ຈິດໃຈ.
- ການຢ່າງໄປມາ: ການເວົ້າໄປຢ່າງໄປມາເຮັດໃຫ້ເດັກນ້ອຍຕິດຕາມໂຄງເລື່ອງ ໄດ້ງ່າຍ.

**ໃຫ້ຈັບຄູ່ຫລືເຮັດເປັນກຸ່ມນ້ອຍໃຫ້ແຕ່ລະຄົນເລົ່າເລື່ອງລາວຂອງພຣະເຢຊູ ແລະ ເປໂຕຢ່າງເທິ່ງນ້ຳແຕ່ຕອນນີ້ໃຫ້ເພີ່ມເທັກນິກການເລົ່າເລື່ອງບາງຢ່າງຂອງຕົນລົງໄປ.**

---

**ກ່ອນພັກຫລືຫລັງພັກໃຫ້ໃຜສັກຄົນເລົ່າເລື່ອງ**

ຄວາມໝັ້ນໃຈ ສັບສົນ ຮູ້ສຶກຜິດ

ມີຄວາມສຸກຜິດຫວັງ ເສຍໃຈ

ມີຄວາມຫວັງ ອອ່ນແຮງ ກໍກວນ
ຢ້ານ ໂກດຮ້າຍ ເຫງົາ
ຮັກ ກະວົນກະວາຍ

## ນີ້ເປັນການມອບໝາຍງານທີ່ຕ້ອງເຮັດໃຫ້ແລ້ວກ່ອນການອົບຮົມໃນ ຄັ້ງຕໍ່ໄປ

**ອ່ານເລື່ອງລາວຂອງ ແກະນ້ອຍຫລົງຫາຍ(ລູກາ 15:1-17)**
**ໃຫ້ອ່ານຫລາຍຄັ້ງໂດຍສະເພາະຢ່າງຍິ່ງໃນການແປທີ່ແຕກຕ່າງກັນຫາກເປັນໄປໄດ້**
**ເລົ່າເລື່ອງໃຫ້ບາງຄົນຟັງກ່ອນທີ່ຈະກັບມາໃນຫ້ອງປະຊຸມ**

ຄຳອຸປະມາແກະນ້ອຍຫລົງຫາຍ ລູກາ15:1-7

1 ຕໍ່ມາບັນດາຄົນເກັບພາສີແລະພວກນອກສິນທັມເຂົ້າມາໃກ້ເພື່ອຈະຟັງພ
ຣະອົງ
2 ຝ່າຍພວກຟາຣີຊາຍແລະພວກນັກທັມກໍຈົ່ມວ່າ, "ຜູ້ນີ້ຕ້ອນຮັບ
ຄົນນອກສິນທັມແລະຢູ່ກິນຮ່ວມກັນກັບເຂົາ"
3 ພຣະອົງຈຶ່ງຊົງກ່າວຄຳອຸປມາຂັ້ນນີ້ໃຫ້ເຂົາຟັງວ່າ,
4 "ໃນພວກທ່ານມີຄົນໃດທີ່ມີແກະຮ້ອຍໂຕ ເມື່ອໂຕນຶ່ງເສັຽໄປ ທ່ານ
ຈະບໍ່ປະເກົ້າສິບເກົ້າໂຕນັ້ນໄວ້ໃນກາງປ່າ ແລະໄປຊອກຫາໂຕທີ່
ເສັຽໄປນັ້ນຈົນກວ່າຈະໄດ້ພົບຫລື
5 ເມື່ອພົບແລ້ວທ່ານກໍຍົກຂຶ້ນໃສ່ບ່າແບກມາດ້ວຍຄວາມຊົມຊື່ນ
ຍິນດີ
6 ເມື່ອມາເຖິງບ້ານແລ້ວ ທ່ານຈຶ່ງເຊີນບັນດາມິດສະຫາຍແລະ
ເພື່ອນບ້ານຂອງຕົນ ໃຫ້ມາພ້ອມພຽງກັນ ແລ້ວຈຶ່ງກ່າວກັບເຂົາ
ວ່າ "ຈົ່ງຊົມຊື່ນຍິນດີກັບເຮົາເທີນ ເພາະວ່າເຮົາໄດ້ພົບແກະ
ຂອງເຮົາໂຕທີ່ເສັຽໄປແລ້ວນັ້ນ"
7 ດັ່ງນັ້ນແຫລະ, ເຮົາບອກທ່ານທັງຫລາຍວ່າ ຈະມີຄວາມປິຕິຍິນດີ
ໃນສວັນ ເພາະເຫັນແກ່ຄົນນອກສິນທັມຄົນດຽວທີ່ຖິ້ມໃຈເກົ່າ
ເອົາໃຈໃໝ່ ຫລາຍກວ່າຈະຍິນດີກັບຄົນສິນທັມເກົ້າສິບເກົ້າ
ຄົນທີ່ບໍ່ຕ້ອງການຖິ້ມໃຈເກົ່າເອົາໃຈໃໝ່

**ເລົ່າເລື່ອງ: ທ່ານຈໍາເລື່ອງໄດ້ດີຂະນາດໃດ?**

ທ່ານໃຊ້ແນວທາງອັນໃດໃນການຝຶກເລົ່າເລື່ອງທີ່ສາມາດເພີ່ມເຕີມເຮັດໃຫ້ເລື່ອງນີ້ມີຊີວິດຊີວາແລະນໍາເດັກນ້ອຍເຂົ້າສູ່ເລື່ອງນີ້ໃດ້?

## ຊ່ວງທີ 4
## ການນະມັດສະການ:
## ເຮັດດ້ວຍວິທີການຂອງພຣະເຢຊູ ມາລະໂກ 6:7-13

---

ທັກທາຍຜູ້ເຂົ້າຮ່ວມການອົບຮົມ
ຫາກມີເວລາໃຫ້ສະທ້ອນປະສົບການທີ່ພວກເຂົາໄດ້ຮັບຊ່ວງສອງສາມວັນກ່ອນໜ້ານີ້ກ່ອນທີ່ເຮົາຈະເລີ່ມຕົ້ນໃນຊ່ວງຕໍ່ໄປ
ຢາກຈະໃຫ້ເຮົາມາເບິ່ງສິ່ງທີ່ພຣະເຢຊູຊົງຄາດຫວັງຈາກເຮົາໃນຖານະເປັນຜູ້ນຳພັນທະກິດໃນພຣະນາມພຣະອົງ
ເລີ່ມຕົ້ນ:(ຫັນໄປຫາຄູແລະແບ່ງປັນ)

**ເປັນເວລາທີ່ພຣະເຈົ້າຊົງໃຊ້ທ່ານດ້ວຍວິທີທີ່ມີປະສິດທິພາບຫລືເປັນເວລາທີ່ທ່ານທໍ້ແທ້ຜິດຫວັງເພາະທ່ານຕ້ອງການເຮັດບາງຢ່າງແຕ່ບໍ່ມີອຸປະກອນທີ່ທ່ານຄິດວ່າທ່ານຕ້ອງການ**

ການແນະນຳ:
ພຣະເຢຊູຊົງສັ່ງສາວົກແລະຮັກສາໂລກທົ່ວແຜ່ນດິນ ພຣະອົງຊົງກັບໄປຍັງບ້ານເກີດຂອງພຣະອົງທີ່ເມືອງນາຊາເຣັດແລະພົບວ່າຄົນທີ່ເຊື່ອວ່າພຣະອົງເປັນບຸດຂອງພຣະເຈົ້ານັ້ນໜ້ອຍ
ຄົນດ້ວຍເຫດນີ້ພຣະອົງຈຶ່ງຊົງເຮັດການຮັກສາໂລກພຽງແຕ່ໜ້ອຍຄັ້ງ,ນີ້ຄືທີ່ທີ່ເຮົາຄວນຈະເລີ່ມຕົ້ນເລື່ອງລາວໃນພຣະຄຳພີຂອງເຮົາຈາກໜັງສືມາລາໂກ,

*ເລົ່າເລື່ອງ:*

***ພຣະອົງຊົງເອີ້ນສາວົກ 12 ຄົນ ມາແລ້ວຊົງໃຊ້ພວກເຂົາອອກໄປເປັນຄູ່ໆແລະປະທານສິດທິອຳນາດໃຫ້ພວກ ເຂົາຂັບຜີອອກໄດ້ ພຣະອົງເວົ້າວ່າບໍ່ຕ້ອງເອົາຫຍັງໄປຕາມທາງ ເວັ້ນແຕ່ໄມ້ເທົ້າ ບໍ່ໃຫ້ເອົາອາຫານເຄືອງນຸ່ງຫົມຖົງຫລືເງິນໃຊ້ສາຍ ແອວໄປແຕ່ໃຫ້ສາວົກໃສ່ເກີບແລະບໍ່ໃຫ້ເອົາເສືອ້ສອງ ໂຕ***

*ແລ້ວພຣະອົງເວົ້າກັບວ່າເມືອເຂົາໄປອາໃສໃນບ້ານບໍ່ວ່າທີໃດໃຫ້ອາໃສໃນບ້ານ ນັ້ນກວ່າຈະອອກເມືອງນັ້ນ ຖ້າບ່ອນໃດບໍ່ຕ້ອນຮັບແລະບໍ່ຟັງພວກທ່ານເມືອຈະອອກຈາກທີນັ້ນຈົງສະບັດຝຸ່ນທີຕິດໃຕ້ເກີບຂອງພວກທ່ານອອກ ສະແດງໃຫ້ເຫັນວ່າຄວາມຜິດຂອງເຂົາ ພວກສາວົກກໍອອກໄປປະກາດໃຫ້ທຸກຄົນກັບໃຈໃຫມ່ ພວກເຂົາຂັບຜີອອກ ຫລາຍຕົນແລະເອີນນ້ຳມັນຊາໂລມຄົນເຈັບເປັນຫາຍຈາກໂຣກ*

**ເລົ່າຊ້ຳ:**

ໃຊ້ເຊືອກເຮັດກິຈະກໍາທີມີຊື່ວ່າ:Vroom
ໂດຍໃຫ້ສົ່ງເຊືອກຕໍ່ກັນໄປເມືອທ່ານບອກຢຸດ
ຄົນທີຈັບເຊືອກຕ້ອງເລົ່າເຫດການທີເກີດຂື້ນໃນຕອນຕໍໄປຂອງເລື່ອງ

**ຄໍາຖາມເພື້ອຄົ້ນຄວ້າ:**

- ທ່ານມັກອັນໃດໃນເລື່ອງນີ້?
- ມີແນ່ນຫຍັງໃຫມ່ໃນເລື່ອງນີ້ທີທ່ານບໍ່ເຄີຍບໍເຄີຍໄດ້ຍິນມາກ່ອນແດ່ ?
- ສາວົກໄດ້ຮັບອານຸຍາດໃຊ້ຫຍັງແດ່?
- ພວກເຂົາມີຫຍັງແດ່?
- ແນ່ນຫຍັງທີເຮັດໃກ້ທ່ານແປກໃຈໃນເລື່ອງນີ້?
- ທ່ານຫມັ້ນໃຈຫລືຄິດວ່າທ່ານຕ້ອງເຮັດຫຍັງແດ່ໃນງານຂອງ ພຣະເຈົ້າ?
- ເລື່ອງນີ້ເຮັດໃຫ້ທ່ານຄິດວ່າພຣະເຈົາຕ້ອງການໃຫ້ທ່ານເຮັດພັນ ທະກິດຢ່າງໃດ?

**ຄໍາຖາມເພື່ອຕອບສະຫນອງ:**

- ແນ່ນຫຍັງຄືສິ່ງທີພຣະວິນຍານບໍລິສຸດຂໍຮອ້ງເມືອທ່ານໄດ້ຍິນເລື່ອງນີ້:
- ພຣະເຈົ້າຕ້ອງການໃຫ້ທ່ານວ່າງໃຈໃນພຣະອົງແລະບໍພື່ງພາຕົນເອງ ຢ່າງໄດ້ແລະແບບໃດ?

ຊ່ວງທີ່ 5
ເລົ່າເລື່ອງຊໍ້າ

---

ການເລົ່າເລື່ອງຊໍ້າເປັນສິ່ງສໍາຄັນທີ່ຈະຕ້ອງເລົ່າໃຫ້ຖືກຊັດເຈນຕາມ

ພຣະຄຳຫາກຜູ້ເຂົ້າຮ່ວມການອົບມົພຣະຄຳພີໃຫ້ພວກເຂົາເປີດແລະອ່ານເລື່ອງລາວຈາກພຣະຄຳຂອງພຣະເຈົ້າອີກຄັ້ງຫຼືໃຫ້ຄົນໜຶ່ງອ່ານ
ເລື່ອງລາວແລະໃຫ້ຜູ້ນຳຕັ້ງຄຳຖາມໂດຍໃຫ້ເບິ່ງຄຳຕອບຈາກພຣະ
ຄຳການທຳກິດຈະກຳຂອງກຸ່ມເພື່ອໃຫ້ເດັກມີສ່ວນຮ່ວມໃນເລື່ອງ
ລາວກໍ່ເປັນປະໂຫຍດອີກທາງແລະຍັງໃຫ້ພວກເຂົາຈົດຈຳເລື່ອງລາວ
ເພື່ອຈະໄດ້ໄປເລົ່າຕໍ່ແກ່ຄົນອື່ນໆໄດ້ຈຳໄດ້ບໍ?ວ່າອັນໃດເປັນສິ່ງສາ
ກົນທີ່ມີຢູ່ໃນທຸກວັດທະນະທຳ?(ການເປັນເຈົ້າຂອງ)ເກມ,ດົນ
ຕີ,ສິລະປະແລະເລື່ອງລາວໆ)ເຮົາສາມາດໃຊ້ສິ່ງເຫລົ່ານີ້ໃນກາ
ນເລົ່າຊໍ້າໂດຍສະເພາະຢ່າງຍິ່ງສຳລັບເດັກໆເກມເປັນສິ່ງທີ່ດີ
ທີ່ຈະຊ່ວຍພວກເຂົາຈົດຈຳໃນສິ່ງທີ່ເຈົ້າກຳລັງທຳ
ເຮົາຈະເຫລັ້ນເກມງ່າຍໆກັບອຸປະກອນທີ່ເຈົ້າຫາໄດ້ໃນທຸກທີ່
ໃຫ້ກຸ່ມຫລິ້ນເກມໂດຍໃຫການເລົ່າເລື່ອງລາວຂອງພຣະເຢຊູແລະເ
ປໂຕຍ່າງເທິງນໍ້າຈາກນັ້ນກຳນົດໃຫ້ແຕ່ລະກຸ່ມທຳກິດຈະກຳທີ່ແຕກຕ່າງກັນດັງຕໍ່ໄປນີ້ໂດຍໃຫ້ເວລາພຽງພໍໃນ ການສາທິດ.

**ເກມ**

- **ບານຊາຍຫາດ:** ໃຫ້ຂຽນຄຳຖາມເລື່ອງລາວໃນພຣະຄຳລົງເບິ່ງລູກບານດ້ວຍປາກເມື່ອເດັກຈັບລູກບອນໄດ້ກໍໃຫ້ຕອບຄຳຖາມທີ່ຢູ່ເບິ່ງລູກ
  ບານຄຸນອາດຈະໃຊ້ແນວຄຳຖາມຫລັກທີ່ເປັນໄປໄດ້ໃນໜ້າທີ່ 36

- **ໂຍນເປັນວົງກົມ:** ໃຊ້ລູກບານຫຼືວັດຖຸອື່ນໆໂຍນໄປທົ່ວກຸ່ມແລະ
  ຄົນທີ່ໂຍນລູກບານຕ້ອງການເລົ່າຕອນຕໍ່ໄປຂອງເລື່ອງລາ

ວພຣະຄໍາພີການ
ໃຊ້ລູກໂປ່ງກໍທໍາໃຫ້ການເຫລັ້ນເກມນ່າຕື່ນເຕັ້ນເຊັ່ນ
ດຽວກັນ

- **ຈັບເວລາ:** ໂມງຈັບເວລາວ່າກຸ່ມສາມາດເລົ່າເລື່ອງໃນພຣະຄໍາພີຕາມ ເວ ລາທີ່ກໍານົດບໍ?
- **ຜູກປີ້ນ:** ໃຊ້ເຊືອຍາວ 5 ຫາລາ ມາຜູກໄວ້ໃຫ້ເປັນວົງກົມໃຫ້ເດັກໆ ຈັບເຊືອກເມື່ອຄຸນອອອກຄໍາສັ່ງໃຫ້ເດັກໆໝຸນວົງເຊືອກຕາມເຂັມໂມງແລະເມື່ອເຈົ້າເວົ້າວ່າ“ຫຍຸດ”ຜູ້ທີ່ຈັບຢູ່ທີ່ປົມເຊືອກໃຫ້ຕອບຄໍາຖາມ ກ່ຽວກັບເລື່ອງລາວໃນພຣະຄໍາຖາມຫຼືຕອນຕໍ່ໄປ
- **ການເລົ່າເລື່ອງລາວ:** ຂຽນຫຼືວາດສ່ວນຕ່າງໆຂອງເລື່ອງລາວໃນພຣະ ຄໍາພີແຜ່ນຊີ້ນສ່ວນກະດານແລ້ວແຈກໃຫ້ເດັກໆໃນຊັ້ນ ໃຫ້ເດັກໆນໍາມາຕໍ່ກັນໃຫ້ເປັນແນວທາງເລື່ອງເຈົ້າອາ ດຈະກໍານົດເວລາໃຫ້ພວກເຂົາທໍາຫຼືຂຽນແນວເລື່ອງອີ ກສອງສາມແຜ່ນຫຼືຫຼາຍກວ່ານັ້ນແລ້ວໃຫ້ເດັກໃນກຸ່ມ ອື່ນໆພະຍາ ຍາມ ເຮັດໃຫ້ສໍາເລັກກ່ອນເປັນກຸ່ມທໍາອີກ
- **ຕັ້ງນັ່ງດົນຕີ:** ຈັດຕັ້ງນັ່ງຫຼືເກົ້າອີ້ເປັນວົງ ກົມໃຫ້ມີຈໍານວນຄົນໃນກຸ່ມໜື່ງອັນເມື່ອເລີ່ມຫລີ້ ນດົນຕີໃຫ້ຄົນເດີນໄປລອບໆເປັນວົງກົມເມື່ອດົນຕີ ຫຍຸດໃຫ້ທຸກຄົນຫາຕັ່ງນັ່ງຫຼືເກົ້າອີ້ນັ່ງຜູ້ທີ່ ບໍ່ມີຕັ່ງໃຫ້ເລົ່າຕອນຕໍ່ໄປ ຂອງເລື່ອງໃຫ້ເຮັດ ເຊັ່ນນັ້ນຕໍ່ໄປຈົນຈົບເລື່ອງ
- **ເກມລູກເຕົ້າ:** ແຕ່ລະກົມນັ່ງເປັນວົງກົມແລະໃຫ້ລູກເ ຕົ້າໜື່ງລູກໃຫ້ ເດັກ ນ້ອຍຄົນທໍາອີກໂຍນລູກເຕົ້າຖ້າໜ້າລູກເຕົ້າເປັນຕົວ

ເລກ 2.3.4 ຫຼື 5

ໃຫ້ພວກເຂົາເລົ່າສິ່ງທໍາອິກທີ່ເກີດຂຶ້ນໃນເລື່ອງລາວຫາກ

ໜ້າລູກເຕົາເປັນເລກ1ໃຫ້ພວກເຂົາຂ້າມໄປແລະຄົນຕໍ່ໄປກໍເລົ່າສິ່ງທີ່ ເກີດຂຶ້ນຫາກພວກເຂົາໂຍນໄດ້ເລກ 6 ກໍຈະຕ້ອງກັບແລະຜູ້ທີ່ຢູ່ບອນກົງກັນຂັມຕ້ອງເຫລັ້ນເລື່ອທີ່ເກີດຂຶ້ນ

ໃນຕອນຕໍ່ໄປເຮັດເຊັ່ນນີ້ຈົນເດັກທຸກຄົນໄດ້ຜົນລັດກັນເລົ່າເລື່ອງລາວພຣະຄໍາພີຈົນຈົບ

## ສິລະປະ

- **ກິດຈະກຳຝາພະນັງ:**ໃຫ້ເດັກແຕ່ລະກຸ່ມຂຽນຄຳຫຼືແຕ້ມຮູບທີ່ ບອກເລື່ອງລາວ
- **ການແຕ້ມຮູບພາບບຸກຄົນ:**ໃຫ້ເດັກແຕ້ມຮູບພາບສີສີກ່ຽວກັບ ເລື່ອງລາວໃນສ່ວນທີ່ພວກເຂົາມັກທີ່ສຸດ
- **ການອອກແບບເສື້ອຍືດ:**ໃຫ້ເດັກແຕ່ລະຄົນອອກແບບດ່ານ ໜ້າຂອງເລື່ອທີ່ເສື້ອຍືດທີ່ບອກເລື່ອງລາວໃນສ່ວນທີ່ສຳຄັນຂອງ ເລື່ອງ
- **Pipecleanersແລະແປ້ງໂດຫຼືດິນນ້ຳມັນ:**ໃຊ້ສິ່ງເຫລົ່ານີ້ຫຼືອຸປະກອນຝີມືອື່ນໆສ້າງແລະເລົ່າເລື່ອງລາວ
- **ປ້າຍໂຄສະນາ:**ອອກແບບປ້ຍໂຄສານາລົມຖານົນກ່ຽວກັບເລື່ອງ ລາວໃນພຣະຄຳພີຫຼືສິ່ງທີ່ເຈົ້າເຫັນວ່າເຊື່ອກໂຍນກັນໄດ້
- **ປິດສະໜາດ້ວຍພາບ:**ວ່າງສ່ວນຕ່າງໆຂອງເລື່ອງລາວແລະໃຫ້ຈົບ ເດົາໃຫ້ໄດ້ວ່າເປັນຮູບຫຍັງ

## ລະຄອນ

- **ການສະແດງ:** ກຳນົດສ່ວນຕ່າງໆຂອງເລື່ອງໃຫ້ກັບເດັກໃນກຸ່ມເບິ່ງ
- **KIDSStoryoard:**ໃຊ້ຕົວລະຄອນຜ້າສັກຫລາດຕ່າງໆແລະໃຫ້ເດັກເລົ່າເລື່ອງໂດຍໃຊ້ຮູບພາບເຫລົ່ານັ້ນຕິດລົງໄປໃນກະດານ

- **ທາຍຄໍາໃບ້:**ໃຫ້ເດັກໆສະແດງສາກຕ່າງໆໂດຍບໍ່ໃຊ້ຄໍາເວົ້າ ແລະໃຫ້ຄົນເບິ່ງເດົາວ່າພວກເຂົາກໍາລັງສະແດງຕົວໃດຂອງເລື່ອງ

- **ອ່ານເລື່ອງລາວໃນພຣະຄໍາພີຊ້ໍາ**ແລະໃຊ້ສຽງປະກອບຫຼືໃຊ້ຄໍາຫຼືວ່າ ທ່າປະກອບເຮັດຊ້ໍາຕະລອດທັງເລື່ອງ
- **ວັດສະດຸຕ່າງໆ:**(ເຊັ່ນຜ້າພັນຄໍ,ເຊືອກ)ເບິ່ງວ່າພວກເຂົາໃຊ້ວັດຖຸອຸປະກອນເຫລົ່ານີ້ໃນການເລົ່າເລື່ອງຈັກຄັ້ງເຈົ້າຈະໃສ່ແຕ່ລະກຸ່ມສຸ່ມ ໃຊ້ວັດຖຸສາມຢ່າງໃນການເລົ່າເລື່ອງລາວ
- **ການເຄື່ອນໄຫວ:**ໃຊ້ການເຄື່ອນໄຫວທີ່ແຕກຕ່າງກັນເພື່ອສະແດງແຕ່ລະຕອນຂອງເລື່ອງເຈົ້າສາມາດກໍານົດໃຫ້ເດັກແຕ່ລະຄົນເຄື່ອນໄຫວຢ່າງໜຶ່ງແລະໃຫ້ທັ້ງໝົດສະແດງເຄື່ອນໄຫວໃຫ້ເປັນເລື່ອງລາວ
- **ສະແດງພາບສະໄລມະນຸດ:**ຫາຜ້າຂະໜາດໃຫຍ່ທີ່ຈະໃຊ້ເປັນຜ້າມ່ານໃຫ້ເດັກສອງຄົນຈັບຜ້າມ່ານເພື່ອຍົກຂຶ້ນລົງເມື່ອເຈົ້າບອກເລືອກເດັກສອງສາມຄົນມາສະແດງຕົວລະຄອນໃນເລື່ອງຂະນະທີ່ຍົກຜ້າມ່ານຂຶ້ນກໍໃຫ້ເດັກທີ່ສວມບົດບາດເໝືອນຢ່າງພາບຂອງເລື່ອງຢືນປະຈໍາຕໍາແໜ່ງທີ່ວາງໄວ້ໃຫ້ພວກເຂົາຍັງຄົງຢູ່ນິ່ງຈົນກວ່າເອົາຜ້າລົງເພື່ອໃຫ້ຜູ້ຊົມໄດ້ເຫັນແຕ່ລະສາກ ຈະມີການປ່ຽນແປງໄປຕາມບົດທີ່ເຈົ້າເລົ່າເລື່ອງ
- **ຫຸ່ນມື:**ສ້າງຫຸ່ນມືງ່າຍໆຈາກສິ່ງຂອງຕ່າງໆເຊັ່ນຖົງຕີນຈາກກະດາດຖ້ວຍກະດາດແລະໄມ້ເພື່ອເລົ່າເລື່ອງລາວ**ດົນຕີ**
- **ແຣັບ:** ມີເດັກແຕ່ງເພງແຣັບເຫລົ່າເຫດການສໍາຄັນຂອງເລື່ອງ

**ໃສ່ເນື້ອງເພງໃໝ່ໃນທຳນອງທີ່ຄຸ້ນເຄີຍ:** ໃຫ້ເດັກເລືອກເພງເດັກງ່າຍໆມາໜຶ່ງ ແລະໃສ່ເນື້ອຮ້ອງກ່ຽວກັບເລື່ອງລາວໃນພຣະຄຳພີ

**ຈັງຫວະ:** ມີຕອດຈັງຫວະແລະເລົ່າເລື່ອງລາວຕາມຈັງຫວະ

- **ເຕັ້ນລຳ:**

  ອອກແບບທ່າເຕັ້ນທີ່ເລົ່າເລື່ອງລາວໃຫ້ໃສ່ເພງປະກອບລົງໄປ

## ການຂຽນ

- **ໜັງສືເລື່ອງ:** ໃຫ້ເດັກໆເລົ່າຜ່ານພາບຫຼືນິທານ(ກະຕູນ)
- **ວານລະສານ:** ເຮັດໃຫ້ເດັກໄດ້ນັ່ງມິດໆແລະທ່ອງທ່ຽວໄປໃນ ເລື່ອງລາວ ແລະຄວາມໝາຍຂອງມັນ
- **ທ້ອບເທັນ:** ໃຫ້ເດັກໆບໍ່ວ່າຈະເປັນກຸ່ມຫຼືລາຍບຸກຄົນຂຽນສິບ ເຫດ ການຂອງເລື່ອງ
- **ອັນໃດຕໍ່ໄປ:** ໃຫ້ເດັກຂຽນສິ່ງທີ່ພຣະເຈົ້າຕ້ອງການໃຫ້ພວກເຂົາທຳເມື່ອ ໄດ້ຍິນຈາກເລື່ອງລາວ
- **ປຽບທຽບ:** ໃຫ້ເດັກແຕ່ລະຄົນເລືອກຕົວລະຄອນມາໜຶ່ງຕົວ ແລ້ວໃຫ້ພວກເຂົາຂຽນແຜນພູມມີທີ່ສະແດງໃຫ້ເຫັນວ່າພວກເຂົາມີຄວາມຄ້າຍຄືກັນແລະຕ່າງຈາກຕົວລະຄອນນັ້ນແນວໃດ

## ຊ່ວງທີ່ 6
## ແກະຫລົງຫາຍ

---

ທຸກຄົນໄດ້ອ່ານເລື່ອງລາວແກະຫາຍເປັນແນວໃດ?
ເຈົ້າໄດ້ເລົ່າເລື່ອງລາວນີ້ໃຫ້ຜູ້ອື່ນໄດ້ຟັງບໍ?
ຖ້າເຈົ້າຊ່ວຍເລົ່າໃຫ້ເຮົາຟັງວ່າເກີດອັນຂື້ນ?
